ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ 3211/ທຄຕລ.2025

ນະຄອນຫຼວງວຽງຈັນ, ວັນທີ 15/10/2025

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ ໃຫ້ບໍລິການທ່ອງທ່ຽວ ຢູ່ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ເຊີນເຂົ້າຮ່ວມການປະມູນລາຄາ ບໍລິການທ່ອງທ່ຽວ ກຸງເທບ-ພັດທະຍາ 4 ວັນ 3 ຄືນ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາຜູ້ສະໜອງ ທີ່ມີຄວາມສົນໃຈ ເຂົ້າຮ່ວມປະມູນລາຄາ ໃຫ້ບໍລິການ **ທ່ອງທ່ຽວກຸງເທບ-ພັດທະຍາ 4 ວັນ 3 ຄືນ ສຳລັບ 17 ທ່ານ**, **ໄລຍະການເດີນທາງ22-25/01/2026,** ຕາມລາຍລະອຽດລຸ່ມນີ້:

| ລ/ດ | ສະຖານທີ່ທ່ອງທ່ຽວ | ເງື່ອນໄຂ |
|---|---|---|
| 1 | - **ພັດທະຍາ:** ຊ໋ອບປິ້ງຫ້າງ Terminal 21, ເກາະລ້ານ, The Oxygen Pattaya, Walking street, ເຂົາພະຕຳນັກ, ສວນນົງນຸດ, ເຂົາສີຈັນ.<br>- **ກຸງເທບ:** ລ່ອງເຮືອ (ອາຫານແລງບຸບເຟ້) ແມ່ນ້ຳເຈົ້າພະຍາ ແລະ ຊ໋ອບປິ້ງຫ້າງ Platinum Fashion Mall. | - ລົດຮັບສົ່ງ ນະຄອນຫຼວງວຽງຈັນ-ເດີ່ນບິນອຸດອນ-ນະຄອນຫຼວງວຽງຈັນ.<br>- ປີ້ຍົນໄປ-ກັບ ອຸດອນ-ກຸງເທບ-ອຸດອນ, ຊັ້ນ economy.<br>- ໂຮງແຮມລະດັບ 3 ດາວ 2 ຄົນ/ຫ້ອງ.<br>- ອາຫານທຸກຄາບ (ເຊົ້າ, ສວາຍ, ແລງ) ຕາມໂປຼແກຼມທົວ.<br>- ລົດນຳທ່ຽວ, ໄກ້ນຳທ່ຽວ, ຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວ.<br>- ຄ່າປະກັນໄພອຸບັດຕິເຫດ.<br>- ອາກອນມູນຄ່າເພີ່ມ 10%. |

➢ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

***ເອກະສານຊອງທີ 1:**

1.1 ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດກ່ຽວກັບການບໍລິການທ່ອງທ່ຽວ: ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດປະຈຳປີ, ໃບຢັ້ງຢືນການເສຍອາກອນປີ 2022-2024 (ເປັນບໍລິສັດທີ່ເຂົ້າລະບົບອາກອນມູນຄ່າເພີ່ມ), ເອກະສານກ່ຽວກັບຜົນງານຜ່ານມາຂອງບໍລິສັດ ແລະ ລາຍລະອຽດໂປຼແກຼມທົວ.

1.2 ສາມາດຍື່ນເອກະສານຂ້າງເທິງໄດ້ ນັບຈາກວັນນີ້ຈົນເຖິງ ວັນພະຫັດ, ທີ 23/10/2025 ກ່ອນເວລາ 11:00 ໂມງ ໂດຍການສົ່ງຟາຍ PDF ເຂົ້າມາທີ່ Email: procurement@bcel.com.la.

***ເອກະສານຊອງທີ 2 (ປິດຊອງ)**:

2.1 ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາ ໃນວັນຄານ, ທີ **11/11/2025 ເວລາ 09:00** ໂມງ. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົວເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 05 ຕຶກ C.

2.2 ໃບສະເໜີລາຄາໃຫ້ລະບຸ ລາຄາ/ໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບ ແລະ ໂດລາ.

2.3 ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນບໍ່ໃຫ້ຫຼຸດ 10% ຂອງມູນຄ່າທັງໝົດລວມອາກອນ ດ້ວຍໜັງສືຄ້ຳປະກັນທີ່ອອກ ໂດຍທະນາຄານພາຍໃນປະເທດ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 30/01/2026) ຫຼື ແຊັກທີ່ວີຊ້າແລ້ວ (ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງແຊັກ/ໜັງສື ຄ້ຳປະກັນດັ່ງກ່າວຄືນໃຫ້ຜູ້ສະໜອງທີ່ບໍ່ໄດ້ຮັບການຄັດເລືອກ, ສຳລັບຜູ້ສະໜອງທີ່ໄດ້ຮັບການຄັດເລືອກ ແມ່ນຈະສົ່ງຄືນຫຼັງຈາກເດີນທາງກັບຈາກການທ່ອງທ່ຽວ.

2.4 ຖ້າຜູ້ສະໜອງບໍ່ວາງເງິນຄ້ຳປະກັນການປະມູນ ຕາມທີ່ລະບຸໄວ້ໃນຂໍ້ທີ 2.3 ແມ່ນ ທຄຕລ ຈະປະຕິເສດການຮັບຊອງໃບສະເໜີລາຄາ.

- **ໝາຍເຫດ**: ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).
- **ເງື່ອນໄຂການເຊັນສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

  - ຖ້າຜູ້ຊະນະການປະມູນ ປະຕິເສດການເຊັນສັນຍາ ຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
  - ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງບໍລິສັດ.
  - ການຊຳລະແມ່ນຈ່າຍເງິນ 02 ງວດ: 50% ພາຍຫຼັງເຊັນສັນຍາທັງ 2 ຝ່າຍສຳເລັດຄົບຖ້ວນ ແລະ ອີກ 50% ກ່ອນການເດີນທາງ 5 ວັນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ມາລິນ ສີລະວົງສິດ

ຕິດຕໍ່ພົວພັນ ໂມງລັດຖະການ:
021 213200 ຕໍ່ 414
020 5499 7895

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............./ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | ໝາຍເຫດ |
|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ | ໂປຼແກຼມທົວ | |
| 1 | ບ/ສ......... | (ເລກທີ/ ລົງວັນທີ) | (ເລກທີ/ ລົງວັນທີ) | (ເລກທີ/ ລົງວັນທີ) | .... ປີ | (ໃຫ້ລະບຸ) | | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .......................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: